ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 021 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.1.2016

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການປ້ອງກັນຊາດ

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງ ປີ 2015 ) ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 016/ສພຊ, ລົງວັນທີ 11 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 02/ຄປຈ, ລົງວັນທີ 15 ມັງກອນ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ການປ້ອງກັນຊາດ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ຈູມມາລີ ໄຊຍະສອນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 016 /ສພຊ

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການປ້ອງກັນຊາດ

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ( ສະບັບປັບປຸງ ປີ 2015 ) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ( ສະບັບປັບປຸງ ປີ 2015 ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າ ພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປ້ອງກັນຊາດ ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 11 ທັນວາ 2015

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ການປ້ອງກັນຊາດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2015

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 67 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2015

# ກົດໝາຍ

# ວ່າດ້ວຍ ການປ້ອງກັນຊາດ

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານປ້ອງກັນຊາດ ເພື່ອຍົກສູງປະສິດທິພາບ ໃນການຊີ້ນຳ ບັນຊາ ການປະຕິບັດໜ້າທີ່ຂອງກຳລັງປ້ອງກັນຊາດ, ເຮັດໃຫ້ວຽກງານດັ່ງກ່າວ ເປັນຄວາມຮັບຜິດຊອບຂອງທົ່ວປວງຊົນລາວ ແນໃສ່ຮັບປະກັນໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ມີຄວາມໝັ້ນຄົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາ ພັດທະນາປະເທດຊາດ.

### ມາດຕາ 2 ການປ້ອງກັນຊາດ

ການປ້ອງກັນຊາດ ແມ່ນ ການປົກປັກຮັກສາ ປະເທດຊາດ, ລະບອບການເມືອງ, ຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ລວມທັງເຂດນ່ານນ້ຳ ແລະ ນ່ານຟ້າ ຂອງ ສປປ ລາວ ດ້ວຍກຳລັງແຮງສັງລວມຂອງທົ່ວປວງຊົນລາວທັງຊາດ ໂດຍມີກຳລັງປະກອບອາວຸດປະຊາຊົນ ເປັນຫຼັກແຫຼ່ງ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ພື້ນຖານປ້ອງກັນຊາດທົ່ວປວງຊົນ** ໝາຍເຖິງ ກຳລັງແຮງປ້ອງກັນຊາດຂອງປະເທດ ທີ່ສ້າງຂຶ້ນບົນພື້ນຖານຊັບພະຍາກອນມະນຸດ, ກຳລັງວັດຖຸ ແລະ ຈິດໃຈ, ມີລັກສະນະທົ່ວປວງຊົນ ຮອບດ້ານ, ເອກະລາດ, ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ;

2. **ກຳລັງແຮງບົ່ມຊ້ອນປ້ອງກັນຊາດ** ໝາຍເຖິງ ກຳລັງແຮງທາງດ້ານ ຊັບພະຍາກອນມະນຸດ, ວັດຖຸ, ການເງິນ ທີ່ສາມາດນຳໃຊ້ ໃນການປະຕິບັດໜ້າທີ່ປ້ອງກັນຊາດ;

3. **ກຳລັງຫຼວງ** ໝາຍເຖິງ ກຳລັງທະຫານ ທີ່ກະຊວງປ້ອງກັນປະເທດ ເປັນຜູ້ ຊີ້ນຳ ບັນຊາໂດຍກົງ;

4. **ກຳລັງທ້ອງຖິ່ນ** ໝາຍເຖິງ ກຳລັງທະຫານ ທີ່ຈັດຕັ້ງຂຶ້ນຢູ່ ແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ, ນະຄອນ ໂດຍແມ່ນ ກອງບັນຊາການທະຫານແຂວງ, ນະຄອນຫຼວງ ຕາງໜ້າກະຊວງປ້ອງກັນປະເທດ ເປັນຜູ້ ຊີ້ນຳ ບັນຊາ;

5. **ເຂດປ້ອງກັນຈັ້ງທ່າ** ໝາຍເຖິງ ເຂດທີ່ໄດ້ຈັດຕັ້ງວຽກງານປ້ອງກັນຊາດ ຕາມເຂດພື້ນທີ່ການປົກຄອງແຕ່ລະຂັ້ນ ໃນເຂດຍຸດທະສາດປ້ອງກັນຊາດ;

6. **ລະບົບປ້ອງກັນຈັ້ງທ່າລວມທົ່ວປະເທດ** ໝາຍເຖິງ ທ່າສະໜາມປ້ອງກັນຊາດທົ່ວປວງຊົນ ແລະ ທ່າສະໜາມຈັ້ງທ່າທົ່ວປວງຊົນ;

7. **ເຈົ້າໜ້າທີ່ຍຸຕິທຳທະຫານ** ໝາຍເຖິງ ເຈົ້າໜ້າທີ່ຂອງ ການປ້ອງກັນພາຍໃນກອງທັບ, ກົມກວດກາກອງທັບ, ອົງການໄອຍະການທະຫານ ແລະ ສານທະຫານ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານປ້ອງກັນຊາດ

ລັດ ຖືເອົາວຽກງານປ້ອງກັນຊາດ ເປັນຍຸດທະສາດພື້ນຖານສຳຄັນ ແລະ ເອົາໃຈໃສ່ ຢ່າງຕັ້ງໜ້າສ້າງກ້ອນກຳລັງແຮງສັງລວມ ທົ່ວປວງຊົນລາວທັງຊາດ ເຂົ້າໃນການປ້ອງກັນຊາດເປັນຕົ້ນຕໍ, ສ້າງ ແລະ ພັດທະນາກຳລັງປະກອບອາວຸດ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຮອບດ້ານ ທັງຮັບປະກັນ ດ້ານປະລິມານ ແລະ ຄຸນນະພາບ.

ລັດ ເອົາໃຈໃສ່ ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງທີ່ດິນ, ງົບປະມານ, ວັດຖຸປະກອນ, ອາວຸດຍຸດໂທປະກອນ, ພາຫະນະເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ ແລະ ອື່ນໆ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານປ້ອງກັນຊາດ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ.

## ມາດຕາ 5 ຫຼັກການເຄື່ອນໄຫວວຽກງານປ້ອງກັນຊາດ

ການເຄື່ອນໄຫວວຽກງານປ້ອງກັນຊາດ ຕ້ອງຮັບປະກັນຫຼັກການ ດັ່ງນີ້:

1. ການຊີ້ນໍາ ນໍາພາ ເດັດຂາດ, ໂດຍກົງ ແລະ ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ;

2. ການເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ, ການຮັກສາ ແລະ ເສີມຂະຫຍາຍມູນເຊື້ອ, ວັດທະນະທໍາອັນດີງາມຂອງຊາດ ແລະ ການນໍາໃຊ້ຄວາມກ້າວໜ້າຂອງຍຸກສະໄໝ;

3. ການປ້ອງກັນຊາດທົ່ວປວງຊົນຮອບດ້ານ ແລະ ການປຸກລະດົມ, ເຕົ້າໂຮມກໍາລັງແຮງສັງລວມ ຂອງທົ່ວປວງຊົນລາວທັງຊາດ ເຂົ້າໃນວຽກງານປ້ອງກັນຊາດ;

4. ການຕິດຕາມ ກວດກາ ແລະ ສົມທົບແໜ້ນ ວຽກງານປ້ອງກັນຊາດ ກັບການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພົວພັນຕ່າງປະເທດ;

5. ການສະກັດກັ້ນ ແລະ ຕ້ານທຸກເລ່ຫຼ່ຽມກົນອຸບາຍ, ການຮຸກຮານ, ການທໍາລາຍ ມ້າງເພ ສປປ ລາວ ຂອງບຸກຄົນ ແລະ ກຸ່ມຄົນບໍ່ດີ ທັງພາຍໃນ ແລະ ຕ່າງປະເທດ ຢ່າງທັນການ;

6. ການຮັກສາຄວາມລັບ ຢ່າງເດັດຂາດ ໃນວຽກງານປ້ອງກັນຊາດ.

**ມາດຕາ 6 ພັນທະປ້ອງກັນຊາດ**

ການປ້ອງກັນຊາດ ເປັນພັນທະຂອງພົນລະເມືອງທຸກຄົນ ຊຶ່ງຕ້ອງເຂົ້າຮ່ວມຢ່າງຕັ້ງໜ້າ ໃນການແຈ້ງ ແລະ ລາຍງານຂໍ້ມູນ, ສະກັດກັ້ນ, ຕອບຕ້ານທຸກເລ່ຫຼ່ຽມກົນອຸບາຍຂອງບຸກຄົນ, ກຸ່ມຄົນບໍ່ດີ ທີ່ກໍ່ຄວາມບໍ່ສະຫງົບພາຍໃນ, ຮຸກຮານ, ລະເມີດອະທິປະໄຕ, ເຂດແດນດິນ, ເຂດນ່ານນໍ້າ ແລະ ເຂດນ່ານຟ້າ.

**ມາດຕາ 7 ການປົກປ້ອງກໍາລັງປ້ອງກັນຊາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງປະຕິບັດໜ້າທີ່ປ້ອງກັນຊາດ ໄດ້ຮັບການປົກປ້ອງຕາມກົດໝາຍ ເມື່ອຖືກກ່າວຫາ, ຖືກຮ້ອງຟ້ອງ, ຖືກໃສ່ຮ້າຍ, ຖືກນາບຂູ່ ໃນເວລາເຄື່ອນໄຫວປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ຫຼື ການມອບໝາຍ ຂອງການຈັດຕັ້ງ.

**ມາດຕາ 8 ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດໍາລົງຊີວິດຢູ່ບົນດິນແດນຂອງ ສປປ ລາວ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານປ້ອງກັນຊາດ ດ້ວຍການແລກປ່ຽນ ບົດຮຽນ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ, ການບຳລຸງຍົກລະດັບຄວາມຮູ້ດ້ານວິຊາສະເພາະ, ປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ບົນຫຼັກການເຄົາລົບ ເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງກິດຈະການພາຍໃນ ຊຶ່ງກັນ ແລະ ກັນ, ສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ລັດ ສົ່ງເສີມການພົວພັນຮ່ວມມື ກັບປະເທດເພື່ອນມິດຍຸດທະສາດ ກ່ຽວກັບວຽກງານປ້ອງກັນຊາດທົ່ວປວງຊົນຮອບດ້ານ.

## ພາກທີ II
## ວຽກງານປ້ອງກັນຊາດ

### ມາດຕາ 10 ວຽກງານປ້ອງກັນຊາດ

ວຽກງານປ້ອງກັນຊາດ ປະກອບດ້ວຍ:

1. ການກຽມພ້ອມສູ້ຮົບ;
2. ການສ້າງທ່າສະໜາມປ້ອງກັນຊາດ;
3. ພາວະສຸກເສີນ;
4. ພາວະສົງຄາມ.

### ມາດຕາ 11 ພື້ນຖານວຽກງານປ້ອງກັນຊາດ

ພື້ນຖານວຽກງານປ້ອງກັນຊາດ ມີ ດັ່ງນີ້:

1. ການສ້າງແຜນຍຸດທະສາດປ້ອງກັນຊາດ, ສ້າງກຳລັງແຮງທີ່ແທ້ຈິງ ແລະ ກຳລັງແຮງບົ່ມຊ້ອນດ້ານປ້ອງກັນຊາດ ໃຫ້ເຂັ້ມແຂງ ຮອບດ້ານ, ສ້າງກ້ອນກຳລັງມະຫາສາມັກຄີທົ່ວປວງຊົນ;

2. ການສ້າງກຳລັງປະກອບອາວຸດປະຊາຊົນເປັນຫຼັກແຫຼ່ງ, ເຂັ້ມແຂງ ຮອບດ້ານ, ມີກຳລັງແຮງສູ້ຮົບ ແລະ ມີລະບຽບແບບແຜນທັນສະໄໝ;

3. ການໂຄສະນາ, ສຶກສາ, ອົບຮົມ ແລະ ບຳລຸງ ວຽກງານປ້ອງກັນຊາດ ໃຫ້ທົ່ວການຈັດຕັ້ງລັດ ແລະ ພົນລະເມືອງ;

4. ການກໍ່ສ້າງພື້ນຖານທາງດ້ານວັດຖຸ, ເຕັກນິກໃຫ້ແກ່ການປ້ອງກັນຊາດທົ່ວປວງຊົນ, ການຄົ້ນຄວ້າຍຸດທະສາດ, ສິລະປະການທະຫານ, ການພັດທະນາອຸດສາຫະກຳປ້ອງກັນຊາດ ແລະ

ລະດົມກຳລັງແຮງບິ່ມຊ້ອນ ທາງດ້ານວິທະຍາສາດ, ເຕັກໂນໂລຊີທີ່ທັນສະໄໝ ເພື່ອຮັບໃຊ້ວຽກງານປ້ອງກັນຊາດ;

5. ການສ້າງແຜນການລະດົມພົນ, ກຳລັງສຳຮອງປ້ອງກັນຊາດ ແລະ ບັນດາເງື່ອນໄຂທີ່ຈຳເປັນ ເພື່ອຮັບປະກັນ ໃນພາວະສຸກເສີນ ແລະ ພາວະສົງຄາມ;

6. ການສ້າງເຂດປ້ອງກັນຈຸ້ງທ່າ ແນວຫຼັງຍຸດທະສາດປ້ອງກັນຊາດທີ່ແໜ້ນໜາ, ການເພີ່ມທະວີກຳລັງແຮງບິ່ມຊ້ອນປ້ອງກັນຊາດ, ປ້ອງກັນຄວາມສະຫງົບຢູ່ພື້ນທີ່ ທີ່ໄດ້ກຳນົດໄວ້ໃນຂອບເຂດທົ່ວປະເທດ;

7. ການກຳນົດນະໂຍບາຍ ທີ່ສອດຄ່ອງ ກັບເງື່ອນໄຂ ແລະ ລັກສະນະການເຄື່ອນໄຫວຂອງຜູ້ຮັບໃຊ້ໃນກຳລັງປະກອບອາວຸດປະຊາຊົນ ຫຼື ຄອບຄົວຂອງຜູ້ກ່ຽວ;

8. ການສ້າງ ແລະ ຈັດຕັ້ງປະຕິບັດແຜນການ, ມາດຕະການປ້ອງກັນຈຸ້ງທ່າທົ່ວປວງຊົນໃນຂອບເຂດທົ່ວປະເທດ.

## ໝວດທີ 1
## ການກຽມພ້ອມສູ້ຮົບ

### ມາດຕາ 12 ການກຽມພ້ອມສູ້ຮົບ

ການກຽມພ້ອມສູ້ຮົບ ມີ ດັ່ງນີ້:

1. ການກຽມພ້ອມສູ້ຮົບ ໃນພາວະປົກກະຕິ;
2. ການກຽມພ້ອມສູ້ຮົບ ໃນພາວະເພີ່ມທະວີ;
3. ການກຽມພ້ອມສູ້ຮົບ ໃນພາວະຄົບຖ້ວນ.

### ມາດຕາ 13 ການກຽມພ້ອມສູ້ຮົບໃນພາວະປົກກະຕິ

ການກຽມພ້ອມສູ້ຮົບໃນພາວະປົກກະຕິ ແມ່ນ ການກຽມພ້ອມສູ້ຮົບ ໃນເວລາສະພາບການຂອງປະເທດ, ຂອບເຂດພື້ນທີ່ກົມກອງຮັບຜິດຊອບ ມີຄວາມສະຫງົບໂດຍພື້ນຖານ ແຕ່ບັນດາ ກົມກອງກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ກໍຕ້ອງດຳເນີນວຽກງານປະຈຳການ ກຽມພ້ອມສູ້ຮົບທາງດ້ານກຳລັງພົນ, ພາຫະນະ, ວັດຖຸຮັບໃຊ້, ອາວຸດ, ກະສູນ ຕາມແຜນການປົກກະຕິ.

**ມາດຕາ 14 ການກຽມພ້ອມສູ້ຮົບໃນພາວະເພີ່ມທະວີ**

ການກຽມພ້ອມສູ້ຮົບໃນພາວະເພີ່ມທະວີ ແມ່ນ ການກຽມພ້ອມສູ້ຮົບ ໃນວັນສຳຄັນຂອງຊາດ, ມີການນາບຂູ່, ເກາະຜິດ, ບຽດຍຶດ ຢູ່ບາງທິດ ຫຼື ຫຼາຍທິດ ຂອງປະເທດ ຫຼື ຈະມີການກໍ່ການກະບົດ, ການລຸກຮືຂຶ້ນ ຢູ່ບາງບໍລິເວນ. ນອກນັ້ນ ຍັງມີການກຽມພ້ອມຮັບມື ແລະ ຕອບຕ້ານສະພາບການ ແລະ ຜົນກະທົບຂອງໄພພິບັດທຳມະຊາດ.

ການຈັດຕັ້ງ ແລະ ການເຄື່ອນໄຫວກ່ຽວກັບການກຽມພ້ອມສູ້ຮົບ ໃນພາວະເພີ່ມທະວີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 ການກຽມພ້ອມສູ້ຮົບໃນພາວະຄົບຖ້ວນ**

ການກຽມພ້ອມສູ້ຮົບໃນພາວະຄົບຖ້ວນ ແມ່ນ ການກຽມພ້ອມສູ້ຮົບ ໃນເວລາສະພາບການທາງດ້ານການເມືອງ ຢູ່ ບາງທິດ ຫຼື ຫຼາຍທິດ ຂອງປະເທດ ຖືກນາບຂູ່ ຢ່າງໜັກໜ່ວງ, ບາງບໍລິເວນ ຫຼື ຫຼາຍບໍລິເວນ ເຂດຊາຍແດນ ລະຫວ່າງປະເທດ ມີຄວາມສ່ຽງທີ່ຈະຖືກບຸກໂຈມຕີ, ຮຸກຮານຈາກ ສັດຕູພາຍນອກ, ກຸ່ມຄົນບໍ່ດີພາຍໃນ ມີການເຄື່ອນໄຫວແຫ່ຂະບວນປະທ້ວງ, ລຸກຮືຂຶ້ນໂຄ່ນລົ້ມ ແລະ ກໍ່ຄວາມບໍ່ສະຫງົບ ຕໍ່ຄວາມໝັ້ນຄົງຂອງຊາດ. ບັນດາກຳລັງຫຼວງ, ກຳລັງທ້ອງຖິ່ນ ແລະ ທຸກອົງການຈັດຕັ້ງລັດ, ນິຕິບຸກຄົນ, ບຸກຄົນ ຕ້ອງ ຫັນພາວະກຽມພ້ອມສູ້ຮົບ ຂຶ້ນສູ່ພາວະຄົບຖ້ວນ.

ການຈັດຕັ້ງ ແລະ ການເຄື່ອນໄຫວກ່ຽວກັບການກຽມພ້ອມສູ້ຮົບ ໃນພາວະຄົບຖ້ວນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ການອອກ ຫຼື ຍົກເລີກ ຄຳສັ່ງ ພາວະເພີ່ມທະວີ ແລະ ພາວະຄົບຖ້ວນ**

ລັດຖະມົນຕີກະຊວງປ້ອງກັນປະເທດ ຫຼື ຫົວໜ້າກົມໃຫຍ່ເສນາທິການກອງທັບ ອອກຄຳສັ່ງເຖິງບັນດາກົມກອງ ກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ໃຫ້ກຽມພ້ອມສູ້ຮົບ ໃນພາວະເພີ່ມທະວີ ຫຼື ໃນພາວະຄົບຖ້ວນ.

ເມື່ອສະພາບການຫາກກັບຄືນສູ່ພາວະປົກກະຕິແລ້ວ ກໍອອກຄຳສັ່ງຍົກເລີກ ພາວະເພີ່ມທະວີ ຫຼື ພາວະຄົບຖ້ວນ.

## ໝວດທີ 2
## ການສ້າງທ່າສະໜາມປ້ອງກັນຊາດ

**ມາດຕາ 17 ການສ້າງທ່າສະໜາມປ້ອງກັນຊາດ**

ການສ້າງທ່າສະໜາມປ້ອງກັນຊາດ ມີ ດັ່ງນີ້:

1. ການສ້າງທ່າສະໜາມທົ່ວປວງຊົນ;

2. ການຈັ້ງທ່າທົ່ວປວງຊົນ.

## ມາດຕາ 18 ການສ້າງທ່າສະໜາມທົ່ວປວງຊົນ

ການສ້າງທ່າສະໜາມທົ່ວປວງຊົນ ແມ່ນ ການສ້າງປັດໄຈ ແລະ ເງື່ອນໄຂຮອບດ້ານ ໃຫ້ແກ່ການປ້ອງກັນຊາດ ແນໃສ່ເຮັດໃຫ້ປະເທດຊາດມີສະຖຽນລະພາບ ທາງດ້ານການເມືອງ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຕິດພັນກັບການປ້ອງກັນຊາດ ແລະ ຂະຫຍາຍຕົວໄປຕາມທິດສັງຄົມນິຍົມ.

ອົງການປົກຄອງທ້ອງຖິ່ນ ຕ້ອງສ້າງເຂດທ່າສະໜາມທົ່ວປວງຊົນ ໃນລະບົບປ້ອງກັນຈັ້ງທ່າລວມທົ່ວປະເທດ.

ລັດຖະບານ ກຳນົດເນື້ອໃນການສ້າງເຂດທ່າສະໜາມທົ່ວປວງຊົນ ແລະ ກົນໄກການເຄື່ອນໄຫວຂອງເຂດປ້ອງກັນຈັ້ງທ່າ.

## ມາດຕາ 19 ການຈັ້ງທ່າທົ່ວປວງຊົນ

ການຈັ້ງທ່າທົ່ວປວງຊົນ ແມ່ນ ການກໍ່ສ້າງພື້ນຖານໂຄງລ່າງ ທາງດ້ານເສດຖະກິດ, ການຜະລິດກະສິກຳ ແລະ ອຸດສາຫະກຳ, ການຄົມມະນາຄົມຂົນສົ່ງ ແລະ ກິດຈະການກໍ່ສ້າງຕ່າງໆ ທີ່ຢູ່ໃນເຂດຍຸດທະສາດປ້ອງກັນຊາດ ພ້ອມກັນນັ້ນກໍຕ້ອງຕ້ານ ແລະ ສະກັດກັ້ນສົງຄາມ, ປ້ອງກັນ ແລະ ຄວບຄຸມໄພພິບັດ ແລະ ພະຍາດລະບາດ, ປ້ອງກັນປະຊາຊົນ, ການຈັດຕັ້ງ ແລະ ຟື້ນຟູ ຜົນເສຍຫາຍ.

## ມາດຕາ 20 ມາດຕະການຈັ້ງທ່າທົ່ວປວງຊົນ

ມາດຕະການຈັ້ງທ່າທົ່ວປວງຊົນ ແມ່ນ ການສ້າງທ່າສະໜາມສົງຄາມປະຊາຊົນ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ເປັນລະບົບຄົບຊຸດ ດັ່ງນີ້:

1. ພິຈາລະນາແກ້ໄຂບັນດາກໍລະນີ ເມື່ອມີພາວະສຸກເສີນດ້ານການປ້ອງກັນຊາດ ຫຼື ພາວະສົງຄາມ;

2. ປົກປິດ, ປ້ອງກັນພື້ນຖານວັດຖຸ, ສາງຄັງ, ກິດຈະການເສດຖະກິດ ແລະ ວັດທະນະທຳ-ສັງຄົມ; ປະກອບ ອຸປະກອນ, ເຄື່ອງຈັກ, ວັດຖຸດິບ; ແຮໄວ້ ເຄື່ອງບໍລິໂພກ, ເຄື່ອງອຸປະໂພກ, ນ້ຳສະອາດ, ຢາປິ່ນປົວພະຍາດ, ບັນດາຜະລິດຕະພັນ ເຕັກໂນໂລຊີ ຊີວະພາບ; ປົກປັກຮັກສາແຫຼ່ງນ້ຳ, ບັນດາກິດຈະການ, ພູມີປະເທດ ທີ່ມີຄຸນຄ່າທາງດ້ານການປ້ອງກັນຈັ້ງທ່າ;

3. ຮັກສາ ແລະ ປ້ອງກັນສະພາບແວດລ້ອມ;

4. ແນະນຳ, ອົບຮົມ, ຈັດການຫັດແອບ, ຊ້ອມຮົບໃຫ້ປະຊາຊົນ ແລະ ບັນດາກຳລັງກັບທີ່, ນຳໃຊ້ພາຫະນະລີ້ໄພຂອງບຸກຄົນ, ອົບພະຍົບປະຊາຊົນໄປສູ່ເຂດປອດໄພ ຫຼື ມີຄວາມອັນຕະລາຍໜ້ອຍ;

5. ປ້ອງກັນການທຳລາຍທາງອາກາດ, ກໍ່ສ້າງກິດຈະການລີ້ໄພ, ກຳນົດໄຟແສງສະຫວ່າງ, ການແຊມກາຍ ແລະ ການຕິດຕໍ່ສື່ສານ;

6. ຈັດຕັ້ງກຳລັງ ຊອກຫາ, ກອບກູ້, ກູ້ໄພ, ຟື້ນຟູ ຜົນເສຍຫາຍຈາກສົງຄາມ, ໄພພິບັດ ແລະ ພະຍາດລະບາດ;

7. ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ກ່ຽວກັບການຕ້ານ ແລະ ສະກັດກັ້ນ ທາດເຄມີ, ທາດລະເບີດ ກຳມັນຕະພາບລັງສີ ແລະ ອາວຸດທຳລາຍລ້າງຜານ.

**ມາດຕາ 21 ຄວາມຮັບຜິດຊອບກ່ຽວກັບການຈັ້ງທ່າທົ່ວປວງຊົນ**

ຄວາມຮັບຜິດຊອບກ່ຽວກັບການຈັ້ງທ່າທົ່ວປວງຊົນ ມີ ດັ່ງນີ້:

1. ກະຊວງປ້ອງກັນປະເທດ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ໃນການຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດການຈັ້ງທ່າທົ່ວປວງຊົນ ໃນຂອບເຂດທົ່ວປະເທດ ຕາມການມອບໝາຍຂອງລັດຖະບານ;

2. ທະຫານທ້ອງຖິ່ນ ເປັນກຳລັງ ແລະ ເປັນເສນາທິການ ໃຫ້ແກ່ອົງການປົກຄອງແຕ່ລະຂັ້ນ ໃນວຽກງານປ້ອງກັນຈັ້ງທ່າທົ່ວປວງຊົນ ພາຍໃຕ້ການຊີ້ນຳຂອງກະຊວງປ້ອງກັນປະເທດ;

3. ຄະນະພັກ, ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ຊີ້ນຳ ບັນຊາໂດຍກົງ ການຈັດຕັ້ງປະຕິບັດບັນດາມາດຕະການ ປ້ອງກັນຈັ້ງທ່າທົ່ວປວງຊົນ, ເປັນເຈົ້າການປະສານສົມທົບ, ລະດົມກຳລັງກັບທີ່ໃຫ້ປະຕິບັດວຽກງານປ້ອງກັນຈັ້ງທ່າທົ່ວປວງຊົນ ເພື່ອແກ້ໄຂບັນດາກໍລະນີທີ່ເກີດຂຶ້ນໃນທ້ອງຖິ່ນຂອງຕົນ.

ລັດຖະບານ ຮັບຜິດຊອບຊີ້ນຳວຽກງານ ຝຶກອົບຮົມ, ຫັດແອບ ແລະ ສ້າງປ້ອງກັນຈັ້ງທ່າທົ່ວປວງຊົນ.

## ໝວດທີ 3
## ພາວະສຸກເສີນ

### ມາດຕາ 22 ພາວະສຸກເສີນ

ພາວະສຸກເສີນ ແມ່ນ ສະພາບທາງດ້ານສັງຄົມ, ການເມືອງຂອງປະເທດ ທີ່ເກີດມີຄວາມວຸ້ນວາຍ, ມີການກໍ່ການຈາລະຈົນ ຊຶ່ງມີຄວາມສ່ຽງໂດຍກົງຕໍ່ຄວາມໝັ້ນຄົງຂອງຊາດ ຫຼື ມີການເຄື່ອນໄຫວທາງດ້ານອາວຸດຂອງກຸ່ມຄົນບໍ່ດີ ແຕ່ຍັງບໍ່ທັນເຖິງລະດັບສົງຄາມພາຍໃນປະເທດ.

### ມາດຕາ 23 ການປະກາດພາວະສຸກເສີນ

ປະທານປະເທດ ປະກາດພາວະສຸກເສີນ ໃນກໍລະນີມີໄພຂົ່ມຂູ່ ຕໍ່ຄວາມໝັ້ນຄົງທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຄວາມປອດໄພໃນບາງເຂດ ຫຼື ທ້ອງຖິ່ນ ທີ່ພົນແປໄປຢ່າງສັບສົນ ກໍ່ໃຫ້ເກີດມີຄວາມບໍ່ສະຫງົບຢ່າງຮ້າຍແຮງ ເປັນຕົ້ນ ມີການແຫ່ຂະບວນປະທ້ວງ, ການກໍ່ການຈາລະຈົນ ແລະ ການລຸກຮືຂຶ້ນຕ້ານລະບອບ ປະຊາທິປະໄຕ ປະຊາຊົນ ຂອງກຸ່ມຄົນບໍ່ດີທີ່ປະກອບອາວຸດ ຢູ່ພາຍໃນ ຫຼື ສົມທົບກັບ ສັດຕູພາຍນອກ.

ການປະກາດພາວະສຸກເສີນ ຕ້ອງກໍານົດ ຂອບເຂດພື້ນທີ່, ເວລາເລີ່ມຕົ້ນ ແລະ ເວລາສິ້ນສຸດພາວະສຸກເສີນ.

ນາຍົກລັດຖະມົນຕີ ຊີ້ນໍາການຈັດຕັ້ງປະຕິບັດ ການປະກາດພາວະສຸກເສີນໃນທົ່ວປະເທດ.

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຈັດຕັ້ງປະຕິບັດ ການປະກາດພາວະສຸກເສີນ ຢູ່ໃນຂອບເຂດທີ່ຕົນຮັບຜິດຊອບ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃນເຂດປະກາດພາວະສຸກເສີນ ຕ້ອງປະຕິບັດຢ່າງເຂັ້ມງວດ.

ເມື່ອສະພາບກັບຄືນສູ່ປົກກະຕິແລ້ວ ປະທານປະເທດ ກໍປະກາດຍົກເລີກພາວະສຸກເສີນ.

### ມາດຕາ 24 ການປະກາດ ແລະ ການຍົກເລີກ ກົດໄອຍະການເສິກ

ກົດໄອຍະການເສິກ ແມ່ນ ມາດຕະການຄຸ້ມຄອງຂອງລັດ ໃນກໍລະນີບໍ່ມີ ຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຄວາມປອດໄພໃນເຂດພື້ນທີ່, ບໍລິເວນໃດໜຶ່ງຂອງປະເທດຢ່າງຮ້າຍແຮງ ຊຶ່ງອົງການປົກຄອງທ້ອງຖິ່ນ ບໍ່ສາມາດຄວບຄຸມສະຖານະການໄດ້.

ປະທານປະເທດ ເປັນຜູ້ປະກາດກົດໄອຍະການເສິກ ຕາມການສະເໜີ ຂອງນາຍົກລັດຖະມົນຕີ.

ການປະກາດກົດໄອຍະການເສິກ ຕ້ອງກຳນົດຂອບເຂດພື້ນທີ່, ບໍລິເວນໃຫ້ລະອຽດ, ພັນທະຂອງພົນລະເມືອງ, ມາດຕະການ ແລະ ກົນໄກຄຸ້ມຄອງ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.

ການປະກາດກົດໄອຍະການເສິກ ຕ້ອງດຳເນີນຜ່ານສື່ມວນຊົນ ຢ່າງຕໍ່ເນື່ອງ.

ລັດຖະມົນຕີ ກະຊວງປ້ອງກັນປະເທດ ຫຼື ຫົວໜ້າກົມໃຫຍ່ເສນາທິການກອງທັບ ເປັນຜູ້ຈັດຕັ້ງປະຕິບັດການປະກາດກົດໄອຍະການເສິກ, ມີຄວາມຮັບຜິດຊອບ ຊີ້ນຳ ບັນຊາ ບັນດາກົມກອງທະຫານທີ່ໄດ້ຮັບມອບໝາຍໃຫ້ປະຕິບັດໜ້າທີ່ ໃນເຂດປະກາດກົດໄອຍະການເສິກ.

ຜູ້ບັນຊາກົມກອງທະຫານທີ່ໄດ້ຮັບມອບໝາຍ ມີສິດນຳໃຊ້ມາດຕະການທີ່ຈຳເປັນ ເພື່ອປະຕິບັດການປະກາດກົດໄອຍະການເສິກ.

ເຈົ້າໜ້າທີ່ຍຸຕິທຳທະຫານ ເປັນຜູ້ດຳເນີນຄະດີຕາມກົດໝາຍ ຕໍ່ຜູ້ລະເມີດກົດໄອຍະການເສິກ.

ປະທານປະເທດ ປະກາດຍົກເລີກ ກົດໄອຍະການເສິກ ເມື່ອສະພາບກັບຄືນສູ່ປົກກະຕິຕາມການສະເໜີຂອງນາຍົກລັດຖະມົນຕີ.

## ໝວດທີ 4
## ພາວະສົງຄາມ

### ມາດຕາ 25 ພາວະສົງຄາມ

ພາວະສົງຄາມ ແມ່ນ ສະພາບທີ່ມີການປະທະກັນ ດ້ວຍກຳລັງປະກອບອາວຸດ, ມີການ ນາບຂູ່, ບຽດບີດ, ບຸກຕີ ແລະ ຮຸກຮານ ຈາກສັດຕູພາຍນອກ ເຮັດໃຫ້ສັງຄົມ ການເມືອງພາຍໃນປະເທດມີຄວາມວຸ້ນວາຍ ກໍ່ໃຫ້ເກີດມີຄວາມເສຍຫາຍ ຕໍ່ຊີວິດ, ຊັບສິນຂອງພົນລະເມືອງ, ມີຄວາມເປັນອັນຕະລາຍຮ້າຍແຮງ ຕໍ່ຄວາມໝັ້ນຄົງຂອງຊາດ.

### ມາດຕາ 26 ການປະກາດ ຫຼື ການຍົກເລີກພາວະສົງຄາມ

ປະທານປະເທດ ປະກາດ ຫຼື ຍົກເລີກພາວະສົງຄາມ ແລະ ລະດົມກຳລັງພົນ ຕາມການຕົກລົງຂອງສະພາແຫ່ງຊາດ.

**ມາດຕາ 27 ການປະກາດ ຫຼື ການຍົກເລີກ ຄຳສັ່ງລະດົມກຳລັງພົນສຳຮອງຄັ້ງໃຫຍ່**

ນາຍົກລັດຖະມົນຕີ ອອກຄຳສັ່ງລະດົມກຳລັງພົນສຳຮອງຄັ້ງໃຫຍ່, ຫັນທຸກການເຄື່ອນໄຫວທາງດ້ານເສດຖະກິດ, ວັດທະນະທຳ, ສັງຄົມ ເພື່ອຮັບໃຊ້ການສູ້ຮົບໃນຍາມສົງຄາມ.

ລັດຖະມົນຕີກະຊວງປ້ອງກັນປະເທດ ຕົກລົງເພີ່ມກຳລັງທະຫານສຳຮອງ, ອາວຸດຍຸດໂທປະກອນ ແລະ ພາຫະນະເຕັກນິກ ໃຫ້ກຳລັງສູ້ຮົບ.

ນາຍົກລັດຖະມົນຕີ ປະກາດຍົກເລີກ ຄຳສັ່ງລະດົມກຳລັງພົນສຳຮອງຄັ້ງໃຫຍ່ ເມື່ອສົງຄາມໄດ້ສິ້ນສຸດລົງ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

**ມາດຕາ 28 ການປະກາດ ຫຼື ການຍົກເລີກ ຄຳສັ່ງລະດົມກຳລັງພົນສຳຮອງບາງສ່ວນ**

ລັດຖະມົນຕີກະຊວງປ້ອງກັນປະເທດ ອອກຄຳສັ່ງລະດົມກຳລັງພົນສຳຮອງບາງສ່ວນ ຕາມການຕົກລົງຂອງນາຍົກລັດຖະມົນຕີ ເພື່ອປະກອບໃຫ້ກົມກອງ ແລະ ທ້ອງຖິ່ນ ທີ່ຖືກຮຸກຮານໂດຍກົງ ຫຼື ເພື່ອປະກອບເພີ່ມເຕີມໃຫ້ກົມກອງ ແລະ ທ້ອງຖິ່ນໃກ້ຄຽງ.

ລັດຖະມົນຕີກະຊວງປ້ອງກັນປະເທດ ປະກາດຍົກເລີກ ຄຳສັ່ງລະດົມກຳລັງພົນສຳຮອງບາງສ່ວນ ເມື່ອສົງຄາມໄດ້ສິ້ນສຸດລົງ.

## ພາກທີ III

## ກຳລັງປະກອບອາວຸດປະຊາຊົນ ແລະ ການສຶກສາອົບຮົມວຽກງານປ້ອງກັນຊາດ

## ໝວດທີ 1

## ກຳລັງປະກອບອາວຸດປະຊາຊົນ

**ມາດຕາ 29 ກຳລັງປະກອບອາວຸດປະຊາຊົນ**

ກຳລັງປະກອບອາວຸດປະຊາຊົນ ແມ່ນ ການຈັດຕັ້ງໜຶ່ງຂອງລັດ ຊຶ່ງມີໜ້າທີ່ກຽມພ້ອມສູ້ຮົບ, ສູ້ຮົບເພື່ອປົກປັກຮັກສາ ເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ລະບອບປະຊາທິປະໄຕປະຊາຊົນ ແລະ ໝາກຜົນຂອງການປະຕິວັດ ຮ່ວມກັບທົ່ວປວງຊົນ.

ກຳລັງປະກອບອາວຸດປະຊາຊົນ ເປັນຫຼັກແຫຼ່ງ ຕອບຕ້ານທຸກເລ່ຫຼ່ຽມ ກົນອຸບາຍຂອງບຸກຄົນ, ກຸ່ມຄົນບໍ່ດີ ແລະ ການແຊກແຊງຮຸກຮານຈາກພາຍນອກ ຮັບປະກັນໃຫ້ປະເທດຊາດມີຄວາມໝັ້ນຄົງ, ມີສະຖຽນລະພາບ ທາງດ້ານການເມືອງ, ສັງຄົມມີຄວາມສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍ.

ກຳລັງປະກອບອາວຸດປະຊາຊົນ ປະກອບດ້ວຍ:

1. ກອງທັບປະຊາຊົນລາວ;
2. ກຳລັງປ້ອງກັນຄວາມສະຫງົບປະຊາຊົນ;
3. ກອງຫຼອນ, ກຳລັງປ້ອງກັນຕົວ ແລະ ກຳລັງສຳຮອງ.

**ມາດຕາ 30 ກອງທັບປະຊາຊົນລາວ**

ກອງທັບປະຊາຊົນລາວ ເປັນຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ.

ກອງທັບປະຊາຊົນລາວ ແມ່ນ ກຳລັງຫຼັກຂອງກຳລັງປະກອບອາວຸດປະຊາຊົນ ໃນການປະຕິບັດໜ້າທີ່ປ້ອງກັນຊາດ ຊຶ່ງມີກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທັບປະຊາຊົນລາວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 ການບັນຊາກອງທັບປະຊາຊົນລາວ**

ປະທານປະເທດ ເປັນ ປະທານສະພາປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຫ່ງຊາດ, ເປັນແມ່ທັບກຳລັງປະກອບອາວຸດປະຊາຊົນ.

ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນ ຮອງປະທານ, ຜູ້ປະຈຳການສະພາປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຫ່ງຊາດ ແລະ ຜູ້ບັນຊາການສູງສຸດກອງທັບປະຊາຊົນລາວ.

ຫົວໜ້າກົມໃຫຍ່ເສນາທິການກອງທັບ ອອກຄຳສັ່ງ ຊີ້ນຳ ບັນຊາກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ກ່ຽວກັບການປ້ອງກັນຊາດ ຕາມການມອບໝາຍ ຂອງລັດຖະມົນຕີກະຊວງປ້ອງກັນປະເທດ.

**ມາດຕາ 32 ກຳລັງປ້ອງກັນຄວາມສະຫງົບປະຊາຊົນ**

ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ນອກຈາກປະຕິບັດໜ້າທີ່ປົກປັກຮັກສາຄວາມສະຫງົບພາຍໃນ, ຄວາມໝັ້ນຄົງທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມແລ້ວ ຍັງມີຄວາມຮັບຜິດຊອບໃນການປ້ອງກັນຊາດ ອີກດ້ວຍ.

ການປະສານສົມທົບ ລະຫວ່າງ ກຳລັງປະກອບອາວຸດປະຊາຊົນດ້ວຍກັນ ໃນການປະຕິບັດໜ້າທີ່ປ້ອງກັນຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 ກອງຫຼອນ, ກຳລັງປ້ອງກັນຕົວ ແລະ ກຳລັງສຳຮອງ**

ກອງຫຼອນ ແມ່ນ ກໍາລັງປ້ອງກັນຊາດຂັ້ນບ້ານ ຊຶ່ງປະຕິບັດໜ້າທີ່ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານ ຫຼື ປະສານສົມທົບກັບກໍາລັງອື່ນ ເພື່ອປ້ອງກັນຂອບເຂດໃດໜຶ່ງ ຕາມການມອບໝາຍຂອງຂັ້ນເທິງ.

ກໍາລັງປ້ອງກັນຕົວ ແມ່ນ ພະນັກງານ, ກໍາມະກອນ, ນັກສຶກສາ ປະກອບອາວຸດ ຊຶ່ງຈັດຕັ້ງຂຶ້ນ ຕາມສໍານັກງານ, ອົງການ, ສະຖານການສຶກສາ, ໂຮງໝໍ, ໂຮງຈັກ, ໂຮງງານ ແລະ ສາງຄັງທີ່ເປັນຂອງ ລັດ, ມີໜ້າທີ່ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນຂອບເຂດທີ່ຕັ້ງຂອງຕົນ.

ກໍາລັງສໍາຮອງ ແມ່ນ ກໍາລັງບໍ່ປະຈໍາການໃນກອງທັບປະຊາຊົນລາວ ໃນຍາມປົກກະຕິ ແຕ່ປະກອບຢູ່ໃນການຈັດຕັ້ງຂອງກອງທັບປະຊາຊົນລາວ ໃນຍາມສຸກເສີນ, ປະຕິບັດໜ້າທີ່ເປັນກອງ ໜູນໃຫ້ແກ່ກໍາລັງປະຈໍາການໃນກອງທັບ ເມື່ອມີຄວາມຕ້ອງການ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງຫຼອນ, ກໍາລັງປ້ອງກັນຕົວ ແລະ ກໍາລັງສໍາຮອງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 34 ການເຄື່ອນໄຫວ ແລະ ນໍາໃຊ້ກໍາລັງປະກອບອາວຸດປະຊາຊົນລາວ

ການເຄື່ອນໄຫວ ແລະ ນໍາໃຊ້ກໍາລັງປະກອບອາວຸດປະຊາຊົນລາວ ໃຫ້ປະຕິບັດ ດັ່ງນີ້:

1. ກໍາລັງປະກອບອາວຸດປະຊາຊົນ ຢູ່ພາຍໃຕ້ການນໍາພາ ເດັດຂາດ, ໂດຍກົງ ແລະ ຮອບ ດ້ານ ຂອງພັກປະຊາຊົນປະຕິວັດລາວ, ໃຕ້ການບັນຊາຂອງປະທານປະເທດ ແລະ ການຄຸ້ມຄອງຢ່າງ ເປັນເອກະພາບຂອງລັດຖະບານ;

2. ລັດຖະມົນຕີກະຊວງປ້ອງກັນປະເທດ ອອກຄໍາສັ່ງ ໃຫ້ກົມໃຫຍ່ເສນາທິການກອງທັບນໍາ ໃຊ້ ກໍາລັງປະກອບອາວຸດປະຊາຊົນ ແລະ ມາດຕະການດ້ານການທະຫານ ໃນພາວະສຸກເສີນ ແລະ ພາວະສົງ ຄາມ;

3. ການເຄື່ອນຍ້າຍ ແລະ ການນໍາໃຊ້ກໍາລັງປະກອບອາວຸດປະຊາຊົນ ໃຫ້ປະຕິບັດຕາມ ການປະກາດພາວະສຸກເສີນ ໃນກໍລະນີມີໄພພິບັດ, ພະຍາດລະບາດ ຫຼື ສະພາບຂົ່ມຂູ່ຮ້າຍແຮງ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ;

4. ຜູ້ບັນຊາກົມກອງທະຫານ ບໍ່ມີສິດເຄື່ອນຍ້າຍກໍາລັງພົນ, ພາຫະນະ, ອາວຸດ ແລະ ກະສູນ ຂອງກົມກອງຢ່າງເດັດຂາດ ຖ້າຫາກບໍ່ມີຄໍາສັ່ງ ຂອງກົມໃຫຍ່ເສນາທິການກອງທັບ.

ໃນກໍລະນີມີຄໍາສັ່ງ ຂອງກົມໃຫຍ່ເສນາທິການກອງທັບ ໃຫ້ເຄື່ອນໄຫວປ້ອງກັນຊາດ ຊຶ່ງບໍ່ມີໃນແຜນການອົບຮົມ, ຫັດແອບ, ຊ້ອມຮົບຕາມປົກກະຕິນັ້ນ ຜູ້ບັນຊາກົມກອງທະຫານ ກໍຕ້ອງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 35 ການຮັບປະກັນການເຄື່ອນໄຫວ ຂອງກໍາລັງປະກອບອາວຸດປະຊາຊົນ**

ການຮັບປະກັນການເຄື່ອນໄຫວ ຂອງກໍາລັງປະກອບອາວຸດປະຊາຊົນ ແມ່ນ ການລະດົມກໍາລັງແຮງຂອງທົ່ວສັງຄົມ ເພື່ອເປັນພື້ນຖານໃຫ້ແກ່ການເຄື່ອນໄຫວ ປະຕິບັດໜ້າທີ່ ຂອງກໍາລັງປະກອບອາວຸດປະຊາຊົນ.

ລັດ ຮັບປະກັນ ທາງດ້ານການຈັດຕັ້ງ, ການນໍາພາ, ການບັນຊາ, ຂໍ້ມູນ ຂ່າວສານ, ການເງິນ, ພະລາທິການ, ອາວຸດ, ອຸປະກອນເຕັກນິກ, ພາຫະນະ, ກິດຈະການ, ການຝຶກອົບຮົມກໍາລັງພົນ, ການຄົມມະນາຄົມ, ສາທາລະນະສຸກ, ຊັບພະຍາກອນທໍາມະຊາດ ທີ່ນໍາໃຊ້ເຂົ້າໃນຈຸດປະສົງປ້ອງກັນຊາດ ແລະ ລະບອບນະໂຍບາຍທີ່ສອດຄ່ອງ ກັບລັກສະນະການເຄື່ອນໄຫວສະເພາະຂອງກໍາລັງປະກອບອາວຸດປະຊາຊົນ.

## ໝວດທີ 2
## ການສຶກສາອົບຮົມວຽກງານປ້ອງກັນຊາດ

**ມາດຕາ 36 ເຂດ ແລະ ເປົ້າໝາຍການສຶກສາອົບຮົມວຽກງານປ້ອງກັນຊາດ**

ການສຶກສາອົບຮົມວຽກງານປ້ອງກັນຊາດ ໃຫ້ປະຕິບັດໃນຂອບເຂດທົ່ວປະເທດ ດ້ວຍເນື້ອໃນ, ຮູບການ, ວິທີການ ທີ່ສອດຄ່ອງ ກັບແຕ່ລະເຂດ ແລະ ແຕ່ລະເປົ້າໝາຍ.

ການສຶກສາອົບຮົມວຽກງານປ້ອງກັນຊາດ ໃຫ້ຈັດເຂົ້າໃນຫຼັກສູດ ການຮຽນ-ການສອນ ໂດຍຖືເປັນວິຊາບັງຄັບ ຢູ່ໃນໂຮງຮຽນແຕ່ຊັ້ນມັດທະຍົມຕອນປາຍຂຶ້ນໄປ.

ສໍາລັບ ຜູ້ທີ່ມີຕໍາແໜ່ງ ນໍາພາ, ຄຸ້ມຄອງໃນການຈັດຕັ້ງລັດ ຕ້ອງໄດ້ຮັບການຝຶກອົບຮົມວຽກງານປ້ອງກັນຊາດ.

ເຂດ, ເປົ້າໝາຍ, ມາດຕະຖານ ແລະ ເງື່ອນໄຂກ່ຽວກັບການສຶກສາອົບຮົມວຽກງານປ້ອງກັນຊາດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 37 ເນື້ອໃນການສຶກສາອົບຮົມວຽກງານປ້ອງກັນຊາດ

ການສຶກສາອົບຮົມວຽກງານປ້ອງກັນຊາດ ຕ້ອງສຸມໃສ່ເນື້ອໃນຕົ້ນຕໍ ດັ່ງນີ້:

1. ສິດ ແລະ ພັນທະຂອງພົນລະເມືອງ ໃນການປົກປັກຮັກສາປະເທດຊາດ;
2. ມູນເຊື້ອຂອງປະຊາຊົນ ໃນການຕໍ່ສູ້ຕ້ານ ການຮຸກຮານຈາກພາຍນອກ, ນໍ້າໃຈຮັກຊາດ ແລະ ການພັດທະນາ, ຮັກລະບອບປະຊາທິປະໄຕປະຊາຊົນ;
3. ສະຕິລະວັງຕົວຕໍ່ກົນອຸບາຍ ຂອງບັນດາອິດທິກຳລັງປໍລະປັກ ທີ່ຕ້ານ ແລະ ທຳລາຍ ສປປ ລາວ;
4. ຄວາມຮູ້ທາງດ້ານວຽກງານປ້ອງກັນຊາດ ແລະ ຄວາມອາດສາມາດ ດ້ານການທະຫານ ທີ່ຈຳເປັນ, ການຝຶກຝົນຫຼໍ່ຫຼອມກຳລັງກາຍ ເພື່ອກຽມພ້ອມໃນການປະຕິບັດພັນທະປ້ອງກັນຊາດ;
5. ຄວາມຮູ້ພື້ນຖານ ກ່ຽວກັບແນວທາງການທະຫານ ແລະ ວຽກງານຄຸ້ມຄອງລັດ ດ້ານ ວຽກງານປ້ອງກັນຊາດ.

### ມາດຕາ 38 ຄວາມຮັບຜິດຊອບ ໃນການສຶກສາອົບຮົມວຽກງານປ້ອງກັນຊາດ

ກະຊວງປ້ອງກັນປະເທດ ເປັນເຈົ້າການປະສານສົມທົບ ກັບກະຊວງສຶກສາທິການ ແລະ ກິລາ ສ້າງຫຼັກສູດສຶກສາອົບຮົມວຽກງານປ້ອງກັນຊາດ ໃຫ້ສອດຄ່ອງກັບແຕ່ລະເປົ້າໝາຍ ແລະ ຊັ້ນຮຽນ ພ້ອມທັງຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

ການຈັດຕັ້ງ ລັດ ແລະ ເອກະຊົນ ມີຄວາມຮັບຜິດຊອບຈັດຕັ້ງປະຕິບັດການສຶກສາອົບຮົມວຽກ ງານປ້ອງກັນຊາດ ຕາມຫຼັກສູດໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

ພົນລະເມືອງລາວທຸກຄົນ ຕ້ອງຖືເອົາການສຶກສາອົບຮົມວຽກງານປ້ອງກັນຊາດ ເປັນໜ້າທີ່ຂອງ ຕົນ ແລະ ຕື່ນຕົວເຂົ້າຮ່ວມ.

## ພາກທີ IV
## ອຸດສາຫະກຳປ້ອງກັນຊາດ

### ມາດຕາ 39 ອຸດສາຫະກຳປ້ອງກັນຊາດ

ອຸດສາຫະກຳປ້ອງກັນຊາດ ແມ່ນ ພາກສ່ວນໜຶ່ງ ຂອງອຸດສາຫະກຳແຫ່ງຊາດ ມີໜ້າທີ່ໃນ ການຄົ້ນຄວ້າວິໄຈ, ພັດທະນາ, ປະດິດສ້າງ, ຜະລິດ, ຄຸ້ມຄອງ, ບຳລຸງຮັກສາ, ສ້ອມແປງ, ດັດແປງ,

ທັນເປັນອຸດສາຫະກຳທັນສະໄໝ, ນຳໃຊ້ເຕັກນິກ, ເຕັກໂນໂລຊີ, ປະກອບອຸປະກອນ, ພາຫະນະການຜະລິດ ເພື່ອຮັບໃຊ້ວຽກງານປ້ອງກັນຊາດ ແລະ ການພັດທະນາປະເທດຊາດ.

**ມາດຕາ 40  ພື້ນຖານອຸດສາຫະກຳປ້ອງກັນຊາດ**

ພື້ນຖານອຸດສາຫະກຳປ້ອງກັນຊາດ ປະກອບດ້ວຍ:

1. ຫົວໜ່ວຍການຜະລິດອຸດສາຫະກຳ ທີ່ລັດຖະບານ ແລະ ຂະແໜງການທີ່ກ່ຽວຂ້ອງລົງທຶນ ໃນການກໍ່ສ້າງພື້ນຖານການຜະລິດຮັບໃຊ້ວຽກງານປ້ອງກັນຊາດ;
2. ຫົວໜ່ວຍທີ່ເຮັດໜ້າທີ່ຄົ້ນຄວ້າວິໄຈ, ຜະລິດ, ສ້ອມແປງພາຫະນະ ເຕັກນິກ, ຍຸດໂທປະກອນ, ອຸປະກອນ ເຕັກນິກການທະຫານ ແລະ ວັດຖຸເຄມີທາດລະເບີດ ທີ່ກະຊວງປ້ອງກັນປະເທດລົງທຶນ ໂດຍກົງ.

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງລວມສູນເປັນເອກະພາບຕໍ່ພື້ນຖານອຸດສາຫະກຳປ້ອງກັນຊາດ ແລະ ອຸດສາຫະກຳ ທີ່ກ່ຽວພັນກັບຄວາມໝັ້ນຄົງ.

## ພາກທີ V
## ການຮັບປະກັນການປ້ອງກັນຊາດ

**ມາດຕາ 41  ການຮັບປະກັນການປ້ອງກັນຊາດ**

ການຮັບປະກັນການປ້ອງກັນຊາດ ປະກອບດ້ວຍ:

1. ການນຳພາ, ການບັນຊາ;
2. ແຫຼ່ງຊັບພະຍາກອນມະນຸດ;
3. ການເງິນ;
4. ຊັບສິນ;
5. ພະລາທິການ ແລະ ເຕັກນິກ;
6. ກິດຈະການປ້ອງກັນຊາດ ແລະ ເຂດຍຸດທະສາດການທະຫານ;
7. ການຄົມມະນາຄົມ, ຂົນສົ່ງ, ການສື່ສານ ແລະ ການບໍລິການຂໍ້ມູນ ຂ່າວສານ;
8. ສາທາລະນະສຸກ.

**ມາດຕາ 42 ການຮັບປະກັນດ້ານ ການນຳພາ, ການບັນຊາ**

ການຮັບປະກັນດ້ານການນຳພາ, ການບັນຊາ ການປ້ອງກັນຊາດ ມີ ດັ່ງນີ້:

1. ກຳລັງປະກອບອາວຸດປະຊາຊົນ ຢູ່ໃຕ້ການນຳພາເດັດຂາດ, ໂດຍກົງ ແລະ ຮອບດ້ານ ຂອງພັກປະຊາຊົນ ປະຕິວັດລາວ;

2. ປະທານປະເທດ ເປັນປະທານສະພາປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຫ່ງຊາດ;

3. ນາຍົກລັດຖະມົນຕີ ເປັນຜູ້ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດການເຄື່ອນໄຫວວຽກ ງານປ້ອງກັນຊາດ;

4. ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຮອງປະທານສະພາປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບແຫ່ງຊາດ ທັງເປັນຜູ້ປະຈຳການ, ເຮັດໜ້າທີ່ປະສານສົມທົບກັບບັນດາກະຊວງ, ອົງການ ລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ເພື່ອວາງແຜນຍຸດທະສາດປ້ອງກັນຊາດ.

**ມາດຕາ 43 ການຮັບປະກັນດ້ານແຫຼ່ງຊັບພະຍາກອນມະນຸດ**

ພົນລະເມືອງລາວ ເປັນແຫຼ່ງຊັບພະຍາກອນຕົ້ນຕໍ ຂອງການປ້ອງກັນຊາດ.

ລັດ ຊຸກຍູ້ ແລະ ສົ່ງເສີມການສ້າງ ແລະ ບຳລຸງແຫຼ່ງຊັບພະຍາກອນມະນຸດ ເພື່ອຮັບປະກັນ ໃຫ້ແກ່ການປ້ອງກັນຊາດ.

**ມາດຕາ 44 ການຮັບປະກັນດ້ານການເງິນ**

ການຮັບປະກັນດ້ານການເງິນ ມີ ດັ່ງນີ້:

1. ລັດ ຮັບປະກັນງົບປະມານ ເພື່ອຮັບໃຊ້ການປະຕິບັດໜ້າທີ່ປ້ອງກັນຊາດ ຕາມກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ;

2. ການຈັດຕັ້ງ, ຫົວໜ່ວຍເສດຖະກິດ ປະກອບສ່ວນການໃຊ້ຈ່າຍ ຮັບໃຊ້ການປະຕິບັດໜ້າ ທີ່ປ້ອງກັນຊາດ;

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ຊັບສິນຮັບໃຊ້ການປ້ອງກັນຊາດ ດ້ວຍຄວາມສະໝັກໃຈ.

**ມາດຕາ 45 ການຮັບປະກັນດ້ານຊັບສິນ**

ຊັບສິນທີ່ຮັບໃຊ້ການປ້ອງກັນຊາດ ແມ່ນ ຊັບສິນຂອງລັດ.

ການຮັບປະກັນດ້ານຊັບສິນ ມີ ດັ່ງນີ້:

1. ວັດຖຸປະກອນ, ພາຫະນະເຕັກນິກ, ອາວຸດ, ຍຸດໂທປະກອນ;
2. ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນ;
3. ຊັບສິນ ຂອງບັນດາກົມກອງ ແລະ ຫົວໜ່ວຍທຸລະກິດ ທີ່ຂຶ້ນກັບກະຊວງປ້ອງກັນປະເທດ;
4. ພາຫະນະ, ວັດຖຸປະກອນ ທີ່ການຈັດຕັ້ງ ແລະ ປະຊາຊົນ ປະດິດອອກມາ ຊຶ່ງລັດໄດ້ລະດົມມາຮັບໃຊ້ວຽກງານປ້ອງກັນຊາດ;
5. ເອກະສານ, ຕຳລາຮຽນການທະຫານ ແລະ ບັນດາກິດຈະການຄົ້ນຄວ້າ ກ່ຽວກັບການປ້ອງກັນຊາດ;
6. ພາຫະນະເຕັກນິກທີ່ໄດ້ ເກັບເກນ, ເຊົ່າ ຫຼື ເໝົາຊື້.

ສຳລັບ ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເໝົາຊື້ ໃນກໍລະນີທີ່ມີຄວາມຈຳເປັນຍ້ອນເຫດຜົນການປ້ອງກັນຊາດນັ້ນ ລັດຕ້ອງທົດແທນຄືນ ຕາມລາຄາເໝົາຊື້ ໃນເວລານັ້ນ ຫຼື ສ້ອມແປງ ໃຫ້ຄືນສູ່ສະພາບເດີມ.

ນອກຈາກນີ້ ລັດ ຍັງສ້າງຄັງສຳຮອງປ້ອງກັນຊາດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານປ້ອງກັນຊາດ.

ຊັບສິນຮັບໃຊ້ ແລະ ຄັງສຳຮອງປ້ອງກັນຊາດ ບໍ່ອະນຸຍາດໃຫ້ນຳໃຊ້ເຂົ້າໃນເປົ້າໝາຍອື່ນ.

**ມາດຕາ 46 ການຮັບປະກັນດ້ານພະລາທິການ ແລະ ເຕັກນິກ**

ລັດ ຮັບປະກັນດ້ານພະລາທິການ ແລະ ເຕັກນິກ ເພື່ອຮັບໃຊ້ວຽກງານປັບປຸງກໍ່ສ້າງກຳລັງ ແລະ ປະຕິບັດໜ້າທີ່ປ້ອງກັນຊາດ.

ກະຊວງປ້ອງກັນປະເທດ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານພະລາທິການ ແລະ ເຕັກນິກ ເພື່ອຮັບໃຊ້ການປ້ອງກັນຊາດ ໃນຍາມສັນຕິພາບ ແລະ ຍາມສົງຄາມ.

**ມາດຕາ 47 ການຮັບປະກັນດ້ານກິດຈະການປ້ອງກັນຊາດ ແລະ ເຂດຍຸດທະສາດການທະຫານ**

ລັດ ກໍ່ສ້າງບັນດາກິດຈະການປ້ອງກັນຊາດ ແລະ ເຂດຍຸດທະສາດການທະຫານໃນຂອບເຂດທົ່ວປະເທດ.

ກະຊວງປ້ອງກັນປະເທດ ຄຸ້ມຄອງ ແລະ ນຳໃຊ້ກິດຈະການປ້ອງກັນຊາດ ແລະ ເຂດຍຸດທະສາດການທະຫານ.

**ມາດຕາ 48 ການຮັບປະກັນດ້ານການຄົມມະນາຄົມ, ຂົນສົ່ງ, ການສື່ສານ ແລະ ການບໍລິການຂໍ້ມູນ ຂ່າວສານ**

ລັດ ຮັບປະກັນດ້ານການຄົມມະນາຄົມ, ຂົນສົ່ງ, ການສື່ສານ ແລະ ການບໍລິການຂໍ້ມູນຂ່າວສານ ເພື່ອຮັບໃຊ້ການປ້ອງກັນຊາດ.

ກະຊວງປ້ອງກັນປະເທດ ປະສານສົມທົບ ກັບກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ເພື່ອຮັບໃຊ້ການປ້ອງກັນຊາດ ໃນຍາມສັນຕິພາບ ແລະ ຍາມສົງຄາມ.

**ມາດຕາ 49 ການຮັບປະກັນດ້ານສາທາລະນາສຸກ**

ລັດ ຮັບປະກັນ ໃຫ້ມີການສົ່ງເສີມ ການກັນພະຍາດ ແລະ ສົ່ງເສີມສຸຂະພາບ ທາງດ້ານສາທາລະນະສຸກ ເພື່ອຮັບໃຊ້ການປ້ອງກັນຊາດ.

ກະຊວງປ້ອງກັນປະເທດ ປະສານສົມທົບ ກັບກະຊວງສາທາລະນະສຸກ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານ ສາທາລະນະສຸກ ເພື່ອຮັບໃຊ້ການປ້ອງກັນຊາດ ໃນຍາມສັນຕິພາບ ແລະ ຍາມສົງຄາມ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຈັດຕັ້ງ ເຕົ້າໂຮມກຸ່ມຄົນ ເຄື່ອນໄຫວ ສ້າງຄວາມປັ່ນປ່ວນ ບໍ່ໃຫ້ປວງຊົນ ເຂົ້າຮ່ວມວຽກງານປ້ອງກັນຊາດ;
2. ເຄື່ອນໄຫວທຸກປະເພດທີ່ເປັນການ ແບ່ງແຍກ ຄວາມສາມັກຄີພາຍໃນ ຂອງປະຊາຊົນລາວບັນດາເຜົ່າ;
3. ເມີນເສີຍ, ຫຼີບຫຼີກ ບໍ່ໃຫ້ການຮ່ວມມື, ບໍ່ໃຫ້ການຊ່ວຍເຫຼືອ ໃນເວລາປະເທດຊາດ ມີການລະດົມພົນ, ລະດົມວັດຖຸ ແລະ ຊັບສິນ ເພື່ອຮັບໃຊ້ວຽກງານປ້ອງກັນຊາດ;
4. ສະໜອງ ຂໍ້ມູນ ຂ່າວສານ, ເອກະສານທີ່ເປັນຄວາມລັບຂອງລັດ ຫຼື ຄວາມລັບທາງການທະຫານ, ເງິນ, ຊັບສິນ, ພາຫະນະ, ວັດຖູປະກອນ ເຕັກນິກ, ສະຖານທີ່ ໃຫ້ກຸ່ມຄົນບໍ່ດີ;
5. ຊື້-ຂາຍ, ມີໄວ້ໃນຄອບຄອງ ແລະ ນຳໃຊ້ ອາວຸດເສິກ ທີ່ບໍ່ຖືກຕ້ອງຕາມກົດໝາຍ, ຊື້-ຂາຍ, ແລກປ່ຽນ ແລະ ນຳໃຊ້ ເຄື່ອງແບບຂອງທະຫານ;
6. ຂັດຂວາງ ການປະຕິບັດໜ້າທີ່ ຂອງກຳລັງປ້ອງກັນຊາດ;
7. ລ່ວງລະເມີດ ເຂດຕັ້ງທັບ, ເຂດຍຸດທະສາດການທະຫານ;
8. ສ້າງຕັ້ງກຳລັງປະກອບອາວຸດ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 51 ຂໍ້ຫ້າມສຳລັບ ກຳລັງປະກອບອາວຸດປະຊາຊົນ**

ຫ້າມ ກຳລັງປະກອບອາວຸດປະຊາຊົນ ມີ ພຶດຕິກຳ ດັ່ງນີ້:

1. ລະເມີດຮີດຄອງປະເພນີອັນດີງາມຂອງປະຊາຊົນລາວບັນດາເຜົ່າ;
2. ອອກຄຳສັ່ງ, ລະບຽບການ, ທີ່ຂັດກັບກົດໝາຍ;
3. ປະລະໜ້າທີ່ ແລະ ລະເມີດຄຳສັ່ງ ຂອງຂັ້ນເທິງ;
4. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
5. ຊື້-ຂາຍ, ເອົາອາວຸດ, ລູກກະສູນ, ເຄື່ອງແບບທະຫານ ໃຫ້ຜູ້ອື່ນຢືມ ຫຼື ນຳໃຊ້;

6. ເປີດເຜີຍ, ສະໜອງຂໍ້ມູນ ຂ່າວສານ, ເອກະສານທີ່ເປັນຄວາມລັບຂອງລັດ ຫຼື ຄວາມລັບທາງການທະຫານ;

7. ນາບຂູ່ ແລະ ໃຊ້ຄວາມຮຸນແຮງ ຕໍ່ຜູ້ອື່ນ ເປັນຕົ້ນ ແມ່ຍິງ ແລະ ເດັກນ້ອຍ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VII
## ການຄຸ້ມຄອງ ແລະ ກວດກາວຽກງານປ້ອງກັນຊາດ
### ໝວດທີ 1
### ການຄຸ້ມຄອງວຽກງານປ້ອງກັນຊາດ

**ມາດຕາ 52 ອົງການຄຸ້ມຄອງວຽກງານປ້ອງກັນຊາດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປ້ອງກັນຊາດຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປ້ອງກັນຊາດ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ກອງບັນຊາການທະຫານ ແຂວງ, ນະຄອນຫຼວງ;
3. ກອງບັນຊາການທະຫານ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 53 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານປ້ອງກັນຊາດ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນຍຸດທະສາດ, ຮ່າງນະໂຍບາຍ, ກົດໝາຍ ແລະ ນິຕິກຳກ່ຽວກັບວຽກງານປ້ອງກັນຊາດ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ, ສຶກສາອົບຮົມການເມືອງແນວຄິດ, ແນວທາງຂອງພັກ, ກົດໝາຍຂອງລັດ ແລະ ບັນດາຂໍ້ກຳນົດ, ກົດລະບຽບຂອງກອງທັບໃຫ້ພະນັກງານ, ນາຍ ແລະ ພົນທະຫານໃນທົ່ວປະເທດ;

4. ນຳພາ, ບັນຊາ, ຄຸ້ມຄອງ, ປັບປຸງກໍ່ສ້າງກຳລັງໃຫ້ໜັກແໜ້ນທາງດ້ານການເມືອງ, ແນວຄິດ, ເຂັ້ມແຂງທາງດ້ານລະບຽບວິໄນ ແລະ ການຈັດຕັ້ງ ໃຫ້ສົມເປັນກອງທັບປະຕິວັດຂອງປະຊາຊົນ, ມີລະບຽບແບບແຜນທັນສະໄໝ;

5. ຊີ້ນຳ, ນຳພາກໍ່ສ້າງພັກ, ພະນັກງານ ແລະ ອົງການຈັດຕັ້ງມະຫາຊົນ; ໃຫ້ພະນັກງານນັກຮົບທັງສາມປະເພດກຳລັງ ຮ່ຳຮຽນການເມືອງ, ຝຶກແອບການທະຫານ, ຍົກລະດັບສິນລະປະຍຸດ, ຍຸດທະວິທີ, ຍຸດທະບັ້ນຮົບ, ຍຸດທະສາດ;

6. ປະຕິບັດໜ້າທີ່ຍຸດທະສາດ ໃນການກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດຕິດພັນກັບການກໍ່ສ້າງທ່າສະໜາມປ້ອງກັນຊາດ, ປ້ອງກັນຄວາມສະຫງົບສາມຂັ້ນ ແລະ ປະຕິບັດວຽກງານສາມສ້າງ ແລະ ແກ້ໄຂໜໍ່ແໜງທີ່ກໍ່ຄວາມບໍ່ສະຫງົບ;

7. ກໍ່ສ້າງ ແລະ ຮັບປະກັນດ້ານພະລາທິການ, ເຕັກນິກການທະຫານທີ່ທັນສະໄໝ, ສ້າງພະລາທິການກັບທີ່ ເພື່ອກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ;

8. ປະກາດ ຫຼື ຍົກເລີກຄຳສັ່ງ ກ່ຽວກັບວຽກງານປ້ອງກັນຊາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ້ອງກັນຊາດ;

10. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານປ້ອງກັນຊາດ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ສິດ ແລະ ໜ້າທີ່ຂອງກອງບັນຊາການທະຫານແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ວຽກງານປ້ອງກັນຊາດ ກອງບັນຊາການທະຫານແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ້ອງກັນຊາດ;

2. ໂຄສະນາ ສຶກສາອົບຮົມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ້ອງກັນຊາດ;

3. ສະເໜີ ການກໍ່ສ້າງ, ປັບປຸງ, ຄຸ້ມຄອງ ກຳລັງ, ກອງບັນຊາການທະຫານຂອງຕົນ ຕໍ່ກະຊວງປ້ອງກັນປະເທດ;

4. ກໍ່ສ້າງ, ປັບປຸງ, ຄຸ້ມຄອງ ກຳລັງ, ກອງບັນຊາການທະຫານເມືອງ, ເທດສະບານ, ນະຄອນ ແລະ ກອງຫຼອນ ທີ່ຂຶ້ນກັບຕົນໃນການປະຕິບັດໜ້າທີ່ປ້ອງກັນຊາດ;

5. ປະຕິບັດຄຳສັ່ງ ກ່ຽວກັບວຽກງານປ້ອງກັນຊາດ;

6. ປະສານສົມທົບກັບແຂວງ, ນະຄອນຫຼວງ ທີ່ມີຊາຍແດນຕິດຈອດ, ອົງການຈັດຕັ້ງພາຍໃນແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນ ໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ;

7. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ້ອງກັນຊາດ ຕາມການມອບໝາຍ;

8. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານປ້ອງກັນຊາດ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງກອງບັນຊາການທະຫານເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານປ້ອງກັນຊາດ ກອງບັນຊາການທະຫານເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ້ອງກັນຊາດ;

2. ເຜີຍແຜ່ ສຶກສາອົບຮົມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ້ອງກັນຊາດ;

3. ສະເໜີ ການກໍ່ສ້າງ, ປັບປຸງ, ຄຸ້ມຄອງ ກອງບັນຊາການທະຫານຂອງຕົນ ຕໍ່ກອງບັນຊາການທະຫານແຂວງ, ນະຄອນຫຼວງ;

4. ກໍ່ສ້າງ, ປັບປຸງ, ຄຸ້ມຄອງ ກຳລັງກອງຫຼອນ ທີ່ຂຶ້ນກັບຕົນ;

5. ປະຕິບັດຄຳສັ່ງ ກ່ຽວກັບວຽກງານປ້ອງກັນຊາດ;

6. ປະສານສົມທົບກັບເມືອງ, ເທດສະບານ, ນະຄອນ ທີ່ມີຊາຍແດນຕິດຈອດ, ອົງການຈັດຕັ້ງພາຍໃນເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນອື່ນ ໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ;

7. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານປ້ອງກັນຊາດ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 56 ສິດ ແລະ ໜ້າທີ່ຂອງຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານປ້ອງກັນຊາດ ຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກຳນົດແຜນການ, ໂຄງການ ແລະ ພັດທະນາວຽກງານຂອງຕົນ ທີ່ຕິດພັນກັບວຽກງານປ້ອງກັນຊາດ;

2. ຈັດຕັ້ງກຳລັງປ້ອງກັນຕົວ ເພື່ອຮັກສາຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສຳນັກງານຂອງຕົນ;

3. ຈັດຕັ້ງເຜີຍແຜ່, ສຶກສາອົບຮົມວຽກງານປ້ອງກັນຊາດ ໃຫ້ພະນັກງານ, ລັດຖະກອນວິຊາການ ຫຼື ກຳມະກອນ, ນັກຮຽນ, ນັກສຶກສາ ເຂົ້າຮ່ວມໃນວຽກງານປ້ອງກັນຊາດ;

4. ແຈ້ງ, ລາຍງານ, ສະໜອງຂໍ້ມູນຂ່າວສານ, ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບວຽກງານປ້ອງກັນຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ຂະແໜງການປ້ອງກັນຊາດທີ່ກ່ຽວຂ້ອງຢ່າງທັນການ;

5. ປະຕິບັດຄຳສັ່ງ ກ່ຽວກັບວຽກງານປ້ອງກັນຊາດ;

6. ປະສານສົມທົບ ກັບກະຊວງປ້ອງກັນປະເທດ ຫຼື ກອງບັນຊາການທະຫານແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ ໃຫ້ກະຊວງປ້ອງກັນປະເທດ ຫຼື ກອງບັນຊາການທະຫານແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານປ້ອງກັນຊາດ

**ມາດຕາ 57  ອົງການກວດກາວຽກງານປ້ອງກັນຊາດ**

ອົງການກວດກາວຽກງານປ້ອງກັນຊາດ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນ ກະຊວງປ້ອງກັນປະເທດ, ກອງບັນຊາການທະຫານແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ.

ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນ, ລັດຖະບານ, ອົງການປົກຄອງທ້ອງຖິ່ນ.

**ມາດຕາ 58  ເນື້ອໃນການກວດກາ**

ການກວດກາວຽກງານປ້ອງກັນຊາດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານປ້ອງກັນຊາດ;
2. ການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານປ້ອງກັນຊາດ;
3. ການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ້ອງກັນຊາດ;
4. ບັນຫາອື່ນ ທີ່ພົວພັນກັບການປ້ອງກັນຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 59  ຮູບການ ການກວດກາ**

ຮູບການ ການກວດກາ ມີ ດັ່ງນີ້:

1. ການກວດກາ ຕາມແຜນການປົກກະຕິ;
2. ການກວດກາ ຕາມຄຳສັ່ງທາງລັດຖະການ ຫຼື ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ໃນການດຳເນີນກວດກາວຽກງານປ້ອງກັນຊາດ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ VIII
## ວັນສ້າງຕັ້ງ ແລະ ເຄື່ອງໝາຍ ຂອງກອງທັບປະຊາຊົນລາວ

### ມາດຕາ 60 ວັນສ້າງຕັ້ງກອງທັບປະຊາຊົນລາວ

ວັນສ້າງຕັ້ງກອງທັບປະຊາຊົນລາວ ແມ່ນ ວັນທີ 20 ມັງກອນ 1949.

ທຸກໆ ປີ ກອງທັບປະຊາຊົນລາວ ພ້ອມກັບປະຊາຊົນລາວບັນດາເຜົ່າ ຈັດຕັ້ງການສະເຫຼີມສະຫຼອງວັນດັ່ງກ່າວຢ່າງເປັນຂະບວນ ໃນທົ່ວປະເທດ.

### ມາດຕາ 61 ເຄື່ອງແບບ, ເຄື່ອງໝາຍ, ຕາປະທັບ ຂອງກອງທັບປະຊາຊົນລາວ

ກອງທັບປະຊາຊົນລາວ ມີ ເຄື່ອງແບບ, ເຄື່ອງໝາຍ, ກາໝາຍ, ເຄື່ອງໝາຍຊັ້ນ, ເຄື່ອງແບບເຫຼົ່າຮົບ, ຕາປະທັບ ແລະ ບັດປະຈຳຕົວຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 62 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ພະນັກງານ ລັດຖະກອນວິຊາການ ແລະ ນັກຮົບທີ່ປະຕິບັດໜ້າທີ່ປ້ອງກັນຊາດ ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍ ເຊັ່ນ ນາມມະຍົດວິລະຊົນ, ນັກຮົບແຂ່ງຂັນ, ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ເລື່ອນຊັ້ນ, ເລື່ອນໜ້າທີ່ຮັບຜິດຊອບ ແລະ ຮ່ຳຮຽນຍົກລະດັບ ຕາມລະບຽບການ.

ສຳລັບພະນັກງານ, ລັດຖະກອນວິຊາການ, ນັກຮົບ ແລະ ພົນລະເມືອງທີ່ເສຍອົງຄະ, ເສຍສະລະຊີວິດ ຍ້ອນການປະຕິບັດໜ້າທີ່ປ້ອງກັນຊາດ ຈະໄດ້ຮັບນະໂຍບາຍອຸດໜູນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 63 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດຕາມກົດໝາຍ.

## ພາກທີ X

## ບົດບັນຍັດສຸດທ້າຍ

**ມາດຕາ 64 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 65 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້